ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

----===000===----

ກະຊວງ ກະສິກຳ ແລະ ປ່າໄມ້ ເລກທີ 0283 /ກປ.ກລສ.2006

ນະຄອນຫລວງວຽງຈັນ, ວັນທີ 27 MAR 2006

# ຄຳສັ່ງ

## ຂອງລັດຖະມົນຕີ ວ່າການກະຊວງກະສິກຳ ແລະ ປ່າໄມ້ ວ່າດ້ວຍການເພີ້ມທະວີ ເອົາໃຈໃສ່ ສັກຢາປ້ອງກັນພະຍາດໃຫ້ສັດລ້ຽງ

ເຖິງ: ຫົວໜ້າພະແນກ ກະສິກຳ ແລະ ປ່າໄມ້ແຂວງ ແລະ ນະຄອນຫລວງ ໃນທົ່ວປະເທດ.

- ອີງຕາມດຳລັດ ຂອງນາຍົກລັດຖະມົນຕີ ເລກທີ 85/ນຍ ລົງວັນທີ 31/05/1993 ວ່າດວ້ຍການຄຸ້ມຄອງສັດລ້ຽງ ໃນ ສປປ ລາວ.
- ອີງໃສ່ ກົດລະບຽບ ວ່າດວ້ຍການຄຸ້ມຄອງ ສັດລ້ຽງ ໃນ ສປປ ລາວ ສະບັບ ເລກທີ 0004/ກປ ແລະ ບົດແນະນຳ ການຈັດຕັ້ງປະຕິບັດ ກົດລະບຽບ ດັ່ງກ່າວ ສະບັບ ເລກທີ 0005/ກປ ລົງວັນທີ 02/01/1997.
- ອີງໃສ່ຄຳສັ່ງ ຂອງລັດຖະມົນຕີວ່າການກະຊວງກະສິກຳ ແລະ ປ່າໄມ້ ເລກທີ 1128 /ກປ.ກລສ. 2005, ລົງວັນທີ 12.12.2005 ກ່ຽວກັບການຄຸ້ມຄອງສັດລ້ຽງ ປະຈຳປີ 2006.

ໃນຊ່ວງລະດູແລ້ງ ຂອງປີ 2006 ນີ້ ສະພາບດິນຟ້າອາກາດມີການປ່ຽນແປງບໍ່ປົກກະຕິ,ຈະມີຄວາມແຫ້ງແລ້ງ ແກ່ຍາວ ແລະ ຮ້າຍແຮງກ່ວາປີຜ່ານມາ, ເຮືອນຮັງຂອງພະຍາດ ຢູ່ຫລາຍທອ້ງຖິ່ນ ຍັງບໍ່ທັນໄດ້ຖືກດັບສູນ, ຂະບວນການປອ້ງກັນ ປົກປັກຮັກສາສັດລ້ຽງບໍ່ທັນເຂັ້ມແຂງ, ກວ້າງຂວາງ ແລະ ທົ່ວເຖິງ, ອາດເປັນສາເຫດໃຫ້ພະຍຸພະຍາດສັດ ເກີດລະບາດຂຶ້ນໄດ້, ພ້ອມນັ້ນ ກໍຍັງເປັນສິ່ງທ້າທາຍ ຕໍ່ຜົນສຳເລັດ ຂອງການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມ ຂອງປະເທດເຮົາ.

ສະນັ້ນ, ເພື່ອປ້ອງກັນ ແລະ ປົກປັກຮັກສາສັດລ້ຽງຂອງພວກເຮົາ, ຄວນຈະຊອກຫາທຸກວິທີທາງເພື່ອເປີດກວ້າງ ແລະ ຊີ້ນຳ ຂະບວນການສັກຢາປອ້ງກັນພະຍາດ ແລະ ປິ່ນປົວສັດ ໄປຄຽງຄູ່ກັບການວິໄຈພະຍາດສັດ, ການຄຸ້ມຄອງ ແລະ ປົກປັກຮັກສາສັດລ້ຽງ, ການຜະລິດ ແລະ ປຸງແຕ່ງອາຫານສັດ ໃຫ້ມີຄວາມເຂັ້ມແຂງ ແລະ ມີປະສິດທິພາບສູງຂຶ້ນ.

ລັດຖະມົນຕີ ວ່າການກະຊວງກະສິກຳ ແລະ ປ່າໄມ້ ອອກຄຳສັ່ງ ດັ່ງລຸ່ມນີ້:

1. ໃຫ້ພະແນກກະສິກຳ ແລະ ປ່າໄມ້ ແຂວງ ແລະ ນະຄອນຫລວງ ຊີ້ນຳ ແລະ ມອບໝາຍ ໃຫ້ຂະແໜງລ້ຽງສັດ ແລະ ການປະມົງ ຮີບຮອັນປຸກລະດົມ ຊາວກະສິກອນຜູ້ລ້ຽງສັດ ນັບທັງລ້ຽງແບບຄອບຄົວ, ກຸ່ມ ຫລື ຟາມ ເອົາໃຈໃສ່ດູແລ ປົກປັກຮັກສາສັດລ້ຽງຂອງຕົນ ແລະ ຈັດຕັ້ງ ສັກຢາປ້ອງກັນພະຍາດສັດ ຢ່າງເປັນຂະບວນກວ້າງຂວາງ ຟົດຟື້ນ.
2. ຊຸກຍູ້, ແນະນຳ ຮູບແບບ ການລ້ຽງສັດ ໃຫ້ແກ່ຊາວກະສິກອນ, ໂດຍຈັດຕັ້ງເປັນກຸ່ມຜະລິດ ໃນແຕ່ລະປະເພດສັດລ້ຽງ ດ້ວຍການຫັນເອົາການຜະລິດຂະໜາດນ້ອຍ ກະແຈກກະຈາຍ ກາຍມາເປັນການລ້ຽງສັດ ເປັນກຸ່ມ ຫລື ລ້ຽງແບບອຸດສະຫະກຳ ເທື່ອລະກ້າວ ໃຫ້ມີຂະໜາດທີ່ເໝາະສົມ ກັບຄວາມສາມາດຄຸ້ມຄອງ ແລະ ຕາມຄວາມເຫມາະສົມ ກັບສະພາບແຕ່ລະທ້ອງຖິ່ນ ຕາມຄວາມອາດສາມາດ ຂອງເນື້ອທີ່, ສະພາບດິນຟ້າອາກາດ, ແຫລ່ງນ້ຳ ແລະ ອາຫານສຳລັບສັດ. ພ້ອມນັ້ນ ກໍໃຫ້ຊຸກຍູ້, ແນະນຳຊາວກະສິກອນ ຮູ້ປັບປຸງທົ່ງຫຍ້າ, ປູກພືດຕະກຸນຖົ່ວ, ປູກຕົ້ນໄມ້ເປັນອາຫານສັດ, ເກັບຮັກສາເສດເຫລືອ ຂອງການຜະລິດກະສິກຳ ແລະ ອຸດສະຫະກຳ, ເພື່ອນຳມາປຸງແຕ່ງເປັນອາຫານໃຫ້ສັດກິນ ເຊັ່ນ: ເຟືອງໝັກ, ຫຍ້າໝັກ ແລະ ກອັນແຮ່ທາດເປັນຕົ້ນ.
3. ໃຫ້ສືບຕໍ່ ຊຸກຍູ້ ປຸກລະດົມ ຈັດຕັ້ງຂະບວນການສັກຢາປ້ອງກັນພະຍາດຕ້ານພະຍຸສັດ ໂດຍສະເພາະແມ່ນໃນໄລຍະ ທີ່ມີການປ່ຽນແປງອາກາດຕາມລະດູການ ຈາກລະດູແລ້ງ ເຂົ້າສູ່ລະດູຝົນ ຄື: ໃນລະຫວ່າງ ເດືອນເມສາ ຫາເດືອນກໍລະກົດ ແລະ ຈາກລະດູຝົນເຂົ້າສູ່ລະດູແລ້ງ ໃນລະຫວ່າງ ເດືອນຕຸລາ ຫາເດືອນທັນວາ ຊຶ່ງເປັນໄລຍະທີ່ສັດລ້ຽງ ສາມາດຕິດເຊື້ອພະຍາດໄດ້ງ່າຍ ຈຶ່ງຄວນເອົາໃຈໃສ່ສັກຢາປ້ອງກັນພະຍາດ ຕ້ານພະຍຸສັດ ແຕ່ຫົວທີ ດັ່ງລາຍລະອຽດລຸ່ມນີ້:
   - ສຳລັບ ງົວ-ຄວາຍ ໃຫ້ສັກຢາປ້ອງກັນພະຍາດເຕົ້າໂຮມເລືອດ ງົວ-ຄວາຍ ໃຫ້ໄດ້ 50% ຂອງຝູງສັດ ໃນເຂດອ້ອມຊານເມືອງ ແລະ 35% ຂອງຝູງສັດ ໃນເຂດຫ່າງໄກສອກຫລີກ, ( ຢາປ້ອງກັນພະຍາດເຕົ້າໂຮມເລືອດ ງົວ- ຄວາຍ ມີ 2 ຊະນິດ ຄື: 1. ຊະນິດນ້ຳມັນ ແມ່ນຢາປ້ອງກັນຊະນິດໃໝ່ ສັກ 1 ເທື່ອ ຕໍ່ປີ ແລະ ຊະນິດນ້ຳ ແມ່ນຢາປ້ອງກັນຊະນິດເກົ່າ ສັກ 2 ເທື່ອ ຕໍ່ປີ ).
   - ສຳລັບ ໝູ ໃຫ້ສັກຢາປ້ອງກັນພະຍາດອະຫິວາໝູ 1 ເທື່ອ ຕໍ່ປີ ໃຫ້ໄດ້ 50% ຂອງຝູງສັດ ໃນເຂດອ້ອມຊານເມືອງ ແລະ 30% ຂອງຝູງສັດ ໃນເຂດຫ່າງໄກສອກຫລີກ.
   - ສຳລັບ ສັດປີກ ໃຫ້ສັກຢາປ້ອງກັນພະຍາດນິວຄາເຊີນ 1 ເທື່ອ ຕໍ່ປີ ແລະ ພະຍາດອະຫິວາສັດປີກ 2 ເທື່ອຕໍ່ປີ ໃຫ້ໄດ້ 50% ຂອງຝູງສັດ ໃນເຂດອ້ອມຊານເມືອງ ແລະ 25% ຂອງຝູງສັດ ໃນເຂດຫ່າງໄກສອກຫລີກ.
   - ສະເພາະ ບ່ອນທີ່ເຄີຍເກີດພະຍາດມາກ່ອນ ຕ້ອງປຸກລະດົມ ສັກຢາປ້ອງກັນພະຍາດສັດ ໃຫ້ໄດ້ຢ່າງໜ້ອຍ 70% ຂອງຝູງສັດ ໃນເຂດນັ້ນ.

4. ຊຸກຍູ້ ແນະນຳ ໃຫ້ປະຊາຊົນ ເອົາໃຈໃສ່ຕິດຕາມ ເຝົ້າລະວັງ ແລະ ກວດກາສຸຂະພາບສັດລ້ຽງ ຂອງຕົນເປັນປະຈຳ ຖ້າຫາກມີປະກົດການສະແດງອອກ ຂອງພະຍາດ ຫລື ສົງໃສວ່າ ເປັນພະຍາດລະບາດ ໃຫ້ເຈົ້າຂອງສັດ ຮີບຮ້ອນລາຍງານ ຕໍ່ສັດຕະວະແພດບ້ານ ຫລື ນາຍບ້ານໂດຍດ່ວນ ເພື່ອເຮັດແຈ້ງການພາຍໃນບ້ານ ແລະ ທ້ອງຖິ່ນໃກ້ຄຽງໃຫ້ຮັບຮູ້ນຳ, ແລ້ວຮີບຮ້ອນລາຍງານ ຕໍ່ຫ້ອງການສິ່ງເສີມກະສິກຳ ແລະ ປ່າໄມ້ເມືອງ ເພື່ອກວດກາສະພາບຂອບເຂດການລະບາດ ຂອງພະຍາດຕົວຈິງ, ເກັບກຳຂໍ້ມູນ, ເກັບຕົວຢ່າງ ເພື່ອນຳມາກວດສອບ ແລະ ວິໄຈຊອກຫາເຊື້ອພະຍາດ, ພ້ອມທັງ ວາງມາດຕະການຄວບຄຸມ ໂດຍການແຍກກັກຂັງສັດເຈັບ, ປິ່ນປົວ ແລະ ທຳລາຍຊາກສັດຕາຍ ແລະ ສິ່ງເສດເຫລືອຈາກສັດ ດ້ວຍການເຜົາ ຫລື ຝັງຖິ້ມ, ພ້ອມນັ້ນ ຫ້າມບໍ່ໃຫ້ເຄື່ອນຍ້າຍສັດໃນເຂດດັ່ງກ່າວໄປທີ່ອື່ນ ແລ້ວນຳສະເໜີຕໍ່ທ່ານເຈົ້າເມືອງ ອອກປະກາດເປັນເຂດພະຍາດສັດລະບາດ ຢ່າງເປັນທາງການ, ສ່ວນບ້ານໃກ້ຄຽງຈະຕ້ອງມີມາດຕະການໃນການສັກຢາປ້ອງກັນ ເພື່ອປິດລ້ອມພະຍາດດັ່ງກ່າວ. ພາຍຫລັງ ທີ່ພະຍຸພະຍາດສັດໄດ້ສະຫງົບລົງເປັນປົກະຕິແລ້ວ ພະນັກງານລ້ຽງສັດ ແລະ ການປະມົງແຂວງ ແລະ ນະຄອນຫລວງ, ສົມທົບກັບເມືອງ ແລະ ສັດຕະວະແພດບ້ານ ສ້າງແຜນເຄື່ອນໄຫວສັກຢາປ້ອງກັນພະຍາດສັດຄືນໃໝ່ ໃນເຂດທີ່ເກີດພະຍາດລະບາດ.
5. ເມື່ອໄດ້ຮັບ ຄຳສັ່ງ ສະບັບນີ້ແລ້ວ ໃຫ້ພະແນກກະສິກຳ ແລະ ປ່າໄມ້ແຂວງ ແລະ ນະຄອນຫລວງ ສົມທົບກັບ ອຳນາດການປົກຄອງທ້ອງຖິ່ນແຕ່ລະຂັ້ນ ເພື່ອສ້າງແຜນຈັດຕັ້ງປະຕິບັດ ໃຫ້ປະກົດຜົນເປັນຈິງ ດ້ວຍຄວາມຮັບຜິດຊອບສູງ. ພາຍຫລັງສຳເລັດບັ້ນປຸກລະດົມນີ້ແລ້ວ ໃຫ້ຖອດຖອນບົດຮຽນ ດ້ານດີ, ດ້ານອ່ອນ ແລະ ຈັດຕັ້ງຍ້ອງຍໍ ບຸກຄົນ ຫລື ພາກສ່ວນ ທີ່ມີຜົນງານດີເດັ່ນ ແລ້ວລາຍງານຂຶ້ນຫາຂະແໜງການກ່ຽວຂ້ອງ ແລະ ກະຊວງກະສິກຳ ແລະ ປ່າໄມ້ຊາບ.

ລັດຖະມົນຕີ ວ່າການກະຊວງກະສິກຳ ແລະ ປ່າໄມ້

ກະຊວງກະສິກຳແລະປ່າໄມ້ ລັດຖະມົນຕີ

ສິ່ງນ ສະພັງທອງ

ບ່ອນນຳສົ່ງ:
- ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ 1 ສະບັບ.
  " ເພື່ອໃຊ້ຕາງລາຍງານ "
- ກະຊວງຖະແຫລງຂ່າວ ແລະ ວັດທະນະທຳ 1 ສະບັບ.
  " ເພື່ອຊາບ ແລະ ອອກຂ່າວ "
- ຫ້ອງວ່າການປົກຄອງແຂວງ, ນະຄອນຫລວງວຽງຈັນ 1 ສະບັບ.
  " ເພື່ອຊ່ວຍຊີ້ນຳການຈັດຕັ້ງປະຕິບັດ "
- ພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫລວງ1 ສະບັບ.
  " ເພື່ອຈັດຕັ້ງປະຕິບັດ ແລະ ຕິດຕາມ"
- ກົມ, ກອງ, ສູນ, ສະຖາບັນອ້ອມຂ້າງກະຊວງ/ກປ 1 ສະບັບ.
  " ເພື່ອຊາບ"
- ກົມລ້ຽງສັດ ແລະການປະມົງ 1 ສະບັບ.
  " ເພື່ອຈັດຕັ້ງປະຕິບັດ ແລະ ຕິດຕາມ "
- ເກັບມ້ຽນ 1 ສະບັບ.